# ບົດລາຍງານການເຂົ້າຮ່ວມງານສຳມະນາ ນັກປະພັນເພງໄວໜຸ່ມ Nirmita Composer Workshop ທີ່ ແຂວງ ສຽມລຽບ ປະເທດກາປູເຈຍ.

ໃນວັນທີ 16 – 30 ກໍລະກົດທີ່ຜ່ານມາ ໄດ້ມີການຈັດ ການສຳມະນາ ນັກປະພັນເພງໄວໜຸ່ມ Nirmita Composer Workshop ຂຶ້ນທີ່ແຂວງ ສຽມລຽບ ປະເທດກຳປູເຈຍ ໂດຍການຮ່ວມມືລະຫວ່າງ Nirmita Composer Institute ແລະ Cambodian Living Art.

Nirmita Composer Workshop ດຳເນີນການທີ່ ໂຮງແຮມ Memoire Siem Reap – Cambodia. ຈຸດປະສົງຂອງການຈັດສຳມະນາໃນຄັ້ງນີ້ກໍຄື ການສ້າງ ແລະ ພັດທະນານັກແຕ່ງເພງໄວໜຸ່ມຈາກບັນດາປະເທດອາຊຽນ ໃນການນຳວັດຖຸດິບດົນຕີ, ວັດທະນະທຳຂອງແຕ່ລະປະເທດ, ເຄື່ອງດົນຕີ ຫລື ທຳນອງພື້ນບ້ານຂອງປະເທດນັ້ນໆ ເຂົ້າຮ່ວມກັບບັນດາເຕັກນິກ, ເຄື່ອງດົນຕີ ແລະ ທຳນອງຂອງດົນຕີຕາເວັນຕົກ ແລະ ດົນຕີຄລາສສິກສະໄໝໃໝ່.

ໃນງານຄັ້ງນີ້ໄດ້ມີບັນດາ ສາດສະດາຈານ ດ້ານການແຕ່ງເພງ ແລະ ນັກດົນຕີຈາກຫລາຍປະເທດ ເຂົ້າຮ່ວມໃຫ້ຄຳປຶກສາ, ແລກປ່ຽນບົດຮຽນ ແລະ ສອນກ່ຽວກັບການແຕ່ງເຊັ່ນ: Prof. Chinary Ung ຈາກປະເທດກຳປູເຈຍ ແລະ ອາເມລິກາ, Prof. Koji NAKANO ຈາກປະເທດຍີ່ປຸ່ນ, Prof. Jacob David SUDOL ຈາກປະເທດອາເມລິກາ, Prof. Sean HEIM ຈາກປະເທດອາເມລິກາ, Prof. Corrina BONSHEK ຈາກປະເທດອົດສະຕາລີ ແລະ ອີກຫລາຍໆທ່ານ... ນອກຈາກນັ້ນໄດ້ມີການເຂົ້າຮ່ວມຮຽນການແຕ່ງເພງຈາກບັນດານັກຮຽນທີ່ມາຈາກກຳປູເຈຍ, ລາວ, ມຽນມາ ແລະ ອາເມລິກາ.

ໃນຕະຫລອດໄລຍະສອງອາທິດ ຂອງການດຳເນີນການສຳມະນາ ໄດ້ມີການແລກປ່ຽນການແຕ່ງເພງ ແລະ ນຳສະເໜີບົດເພງຂອງນັກຮຽນແຕ່ລະຄົນ ໃຫ້ກັບບັນດາສາດສະດາຈານ ແລະ ນຳຄຳແນະນຳຕ່າງໆມາປັບປຸງ, ນອກຈາກນັ້ນຍັງໄດ້ມີການບັນຍາຍຈາກນັກດົນຕີ ສາກົນເຊັ່ນ: Violin, Viola, Cello, Piano, Flute, Oboe, English Horn ແລະ ນັກດົນຕີພື້ນເມືອງຂອງກຳປູເຈຍ ກ່ຽວກັບການແຕ່ງເພງໃຫ້ເຄື່ອງດົນຕີເຫລົ່ານັ້ນ.

ນອກຈາກນັ້ນຍັງໄດ້ມີການສະແດງສູ່ສາທາລະນະ ບັນດາບົດເພງຂອງສາດສະດາຈານທີ່ເຂົ້າຮ່ວມສຳມານາຄັ້ງນີ້ແຕ່ງຂຶ້ນເພື່ອງານນີ້ໂດຍສະເພາະ, ການສະແດງຈັດຂຶ້ນຫລັງຈາກການສຳມະນາດຳເນີນການມາໄດ້ເຄິ່ງທາງ ເຊິ່ງກໍເປັນການຈົບການສຳມະນາໃນເຄິ່ງທຳອິດ (ການຮຽນ, ການແລກປ່ຽນ, ການປັບປຸງ,...)

ໃນອາທິດທີ່ສອງຂອງການສຳມະນາ ເຫລົ່ານັກແຕ່ງເພງໜຸ່ມທຸກຄົນຈະໄດ້ດຳເນີນງານດ້ວຍຕົນເອງ ກັບນັກດົນຕີໃນຈຳນວນທີ່ສອດຄ່ອງກັບບົດປະພັນທີ່ຕົນເອງແຕ່ງຂຶ້ນ ໂດຍໄດ້ມີການຈັດຊົ່ວໂມງເຮັດວຽກໃນແຕ່ລະຄົນ. ນັກແຕ່ງເພງໜຸ່ມຈະໄດ້ອະທິບາຍຄວາມໝາຍຂອງເພງ ພ້ອມທັງຮ່ວມໂອ້ລົມເພື່ອແລກປ່ຽນກັບນັກດົນຕີໃນບັນດາເຕັກນິກໃນການຫລິ້ນຂອງແຕ່ລະເຄື່ອງດົນຕີຢ່າງລະອຽດ ໃນສິ່ງທີ່ຕົນຂຽນລົງ ແລະ ຄິດຫາແນວທາງທີ່ຈະນຳສະເໜີເພງຂອງຕົນໃຫ້ອອກມາດີທີ່ສຸດ. ໃນສອງວັນສຸດທ້າຍຂອງອາທິດທີ່ສອງ ເຊິ່ງກໍແມ່ນສອງວັນສຸດ

ທ້າຍຂອງການດຳເນີນການສຳມະນາ ຈະໄດ້ມີການສະແດງບົດເພງຂອງນັກແຕ່ງເພງໜຸ່ມ ຕໍ່ໜ້າບັນດາສາດສະດາຈານ ແລະ ບັນດາ Mentor ທີ່ມາເພີ່ມຈາກປະເທດໄທ, ມຽນມາ, ກາປູເຈຍ, ຫວຽດນາມ ແລະ ອາເມລິກາ. ແລະ ໃນວັນສຸດທ້າຍກໍແມ່ນການອັດສຽງບັນດາບົດເພງຂອງນັກແຕ່ງເພງໜຸ່ມທຸກຄົນ.

ນອກຈາກທຸກຄົນທີ່ໄດ້ເຂົ້າຮ່ວມການສຳມະນາຄັ້ງນີ້ ຈະໄດ້ແລກປ່ຽນການແຕ່ງເພງຂອງປະເທດຕົນໆກັບທຸກໆຄົນແລ້ວ ທຸກຄົນຍັງໄດ້ຮຽນຮູ້ ແລະ ໄດ້ຮ່ວມກັນໃນຫລາຍໆກິດຈະກຳກ່ຽວກັບວັດທະນະທຳກຳປູເຈຍອີກ. ແລະ ທີ່ສຳຄັນແມ່ນ ໄດ້ມິດຕະພາບໃຫມ່ໆຈາກຫມູ່ເພື່ອຮ່ວມສາຍງານ ບໍ່ວ່າຈະເປັນໝູ່ເພື່ອນນັກແຕ່ງເພງໜຸ່ມນຳກັນ, ມິດຕະພາບ ແລະ ການພ້ອມທີ່ຈະຊ່ວຍເຫລືອຈາກບັນດາສາດສະດາຈານໃນອານາຄົດຂ້າງໜ້າ. ການໄດ້ເຂົ້າຮ່ວມສຳມະນາໃນຄັ້ງນີ້ ບົດຮຽນທີ່ທຸກຄົນໄດ້ຮັບນັ້ນເມື່ອທຽບກັບທີ່ໄດ້ຮຽນຈາກໂຮງຮຽນ ຄືກັບນຳບົດຮຽນໄລຍະ 1 ປີມາລວມໃນສອງອາທິດນີ້.

ທ່ານ ອານຸສອນ ປຣານີກາຍ

Tel: +856 20 7887 3378

Email: nuii.exs@gmail.com